# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 09 ມີນາ- 2008 ( 03-09-2008

---

## ດຳຣົງຊີວິດ 3:16 ຄືເຮືອນທີ່ພຣະເຈົ້າສະຖິດຢູ່:

**ຂໍ້ພຣະຄັມພີໃນບົດຮຽນ:** (1 ໂກຣິນໂທ 3:9-17; 6:12-13, 18-20)

**ຄຳຖາມແຫ່ງຊີວິດ:** ແມ່ນຫຍັງຂ້າພະເຈົ້າໄດ້ເຮັດເພື່ອພຣະເຈົ້າຈະໄດ້ສະຖິດຢູ່ເໝືອນກັບຢູ່ໃນບ້ານກໍຄື ໃນຊີວິດຂອງຂ້າພະເຈົ້າເອງແລະໃນໂບດດ້ວຍ?

**ຄວາມຈິງໃນພຣະຄັມພີ:** ການເກັບກຳ ແລະການສ່ອນຕົວແລ້ວ, ຜູ້ທີ່ເຊື່ອແມ່ນມີພຣະວິນຍານບໍຣິສຸດຊົງສະຖິດ ຢູ່ນຳພວກເຂົາ, ເພື່ອເຂົາຈະໄດ້ເຮັດ ແລະທຳທຸກຢ່າງໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ດຳຣົງຊີວິດຢູ່ໃນແຕ່ລະວັນດ້ວຍຄວາມໝັ້ນ ໃຈ ແລະຄວາມຫວັງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

- ຜູ້ທີ່ເຊື່ອຈະໄດ້ຮູ້ເຖິງພຣະປະສົງຂອງພຣະເຈົ້າທີ່ພຣະອົງຊົງມີໃຫ້ພວກເຂົາໄວ້ແລ້ວ; ແລະ
- ຈະໄດ້ສະແດງໃຫ້ເຫັນເຖິງການກະທຳຂອງທ່ານເອງ ແລະໂບດຂອງທ່ານວ່າຈະເຮັດຢ່າງໃດຈຶ່ງຈະເປັນທີ່ ຖວາຍກຽດໃຫ້ແດ່ພຣະເຈົ້າ.

### ການຈັດຕຽມຂອງຄຣູ:

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ.
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ:

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**ແນະນຳ:**

- ສເນີໃຫ້ນັກຮຽນເວົ້າເຣື່ອງບ່ອນທີ່ບໍ່ດີໃນເຮືອນຂອງເຂົາເຈົ້າ. ບາງທີ່ອາຈແມ່ນຫ້ອງເກັບເຄື່ອງ, ຫ້ອງເອົາ ຣົດໄວ້ (ກາຣາຣົດ) ຫ້ອງເຄື່ອງນຸ່ງ. ຫ້ອງທີ່ທ່ານບໍ່ຢາກໃຫ້ຜູ້ໃດເຫັນ....ເປັນຫຍັງພວກເຮົາຈຶ່ງເຊື່ອງຂອງ ເຫລົ່ານີ້ໄວ້ໃນຫ້ອງຕ່າງຫາກ.
- ພວກເຮົາສາມາດເຊື່ອງສິ່ງເຫລົ່ານີ້ຈາກຄົນອື່ນໄດ້, ແຕ່ພວກເຮົາບໍ່ອາດສາມາດເຊື່ອງຫຍັງຈັກສິ່ງຢ່າງຈາກ

ພຣະເຈົ້າ. ພຣະວິຍຍານຮູ້ຈັກທຸກແຈ ທຸກມຸມ ແລະຮອຍແຕກຂອງຊີວິດພວກເຮົາ ແລະພຣະເຈົ້າຍັງຕ້ອງການເຮັດໃຫ້ຫົວໃຈຂອງພວກເຮົາເປັນເຮືອນຂອງພຣະອົງ. ຖາມວ່າ: ແມ່ນຫຍັງທີ່ຜ່ານເຂົ້າໄປຫາຫົວໃຈຂອງທ່ານໃນເວລາທີ່ທ່ານໄດ້ຍິນວ່າພຣະເຈົ້າຕ້ອງການສ້າງເຮືອນຂອງພຣະອົງໄວ້ໃນຊີວິດຂອງທ່ານ?

## 1. <u>ຢືນຢູ່ເທິງພື້ນຖານອັນດຽວ:</u> (1 ໂກຣິນໂທ 3:9-11)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 1 ໂກຣິນໂທ 3:9-11
- ໃຫ້ນັກຮຽນຂີດກ້ອງຂໍ້ທີ 9 ໃນບົດຮຽນຂອງເຂົາເຈົ້າ. ແບ່ງນັກຮຽນເປັນ 3 ກຸ່ມ (ກຸ່ມທີ 1 ເປັນ "ເພື່ອນຮ່ວມງານຂອງພຣະເຈົ້າ") (ກຸ່ມທີ 2 ເປັນ "ໄຮ່ນາຂອງພຣະເຈົ້າ") ແລະ (ກຸ່ມທີ 3 ເປັນ "ຕຶກຂອງພຣະເຈົ້າ") ແລ້ວໃຫ້ທຸກກຸ່ມມາຮວມກັນເວົ້າເຣື່ອງທີ່ກຸ່ມຂອງຕົນຄົ້ນຄວ້າມາໄດ້ໃຫ້ກັນຟັງ.
- ໃຫ້ນັກຮຽນອາສາສມັກອ່ານພຣະທັມ ເອຊາຢາ 28:16; ມັດທາຍ 7:14-25; 1 ໂກຣິນໂທ 15:14; ແລະ 1 ຕີໂມທຽວ 3:15 ເພື່ອຈະໄດ້ເຂົ້າໃຈເພີ້ມເຕີມ ແລະເບິ່ງເຫັນຢ່າງເລິກເຊິ່ງ ທີ່ສະທ້ອນເຖິງພຣະເຢຊູຄຣິດ ແລະວິຫານຂອງພຣະອົງ ຊຶ່ງເປັນພື້ນຖານຂອງຄວາມເຊື່ອ.
- ສົນທະນາກັນເຣື່ອງ: ລົມພະຍຸ, ລົມນໍຣະສຸມ, ນໍ້າຖ້ວມ, ແລະພັຍທັມມະຊາດອື່ນ ໆ ມາທໍາລາຍຢ່າງໃດ, ພວກເຮົາມັກຈະເຫັນຢູ່ເລື້ອຍວ່າມີແຕ່ພື້ນຖານເຮືອນເທົ່ານັ້ນທີ່ຍັງເຫລືອຢູ່, ສິ່ງນີ້ໄດ້ສະທ້ອນໃຫ້ນຶກເຫັນພາບຂອງຊີວິດທີ່ຖືກພາຍຸພັດນັ້ນເປັນຢ່າງໃດ, ຣັດແນວໃດພື້ນຖານຄວາມເຊື່ອຂອງພວກເຮົາຈຶ່ງຢູ່ໃນພື້ນຖານພຣະເຢຊູຄຣິດ, ໃນພື້ນຖານຂອງພຣະເຢຊູຄຣິດເທົ່ານັ້ນທີ່ຕັ້ງຢູ່ໝັ້ນຄົງຖາວອນ ແລະບໍ່ມີການປ່ຽນແປງ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: (1 ໂກຣິນໂທ 3:9-11)

1. ເປັນຜູ້ຮ່ວມທໍາງານຂອງພຣະເຈົ້ານັ້ນມີຄວາມໝາຍແນວໃດ? ໄຮ່ນາຂອງພຣະເຈົ້າເດ? ຕຶກຂອງພຣະເຈົ້າເດ?
2. ດ້ວຍເຫດໃດຈຶ່ງວ່າເປັນການສໍາຄັນທີ່ໃຫ້ມີພື້ນຖານແຂງໃນການສ້າງຕຶກ?
3. ດ້ວຍເຫດໃດຈຶ່ງວ່າມີຄວາມສໍາຄັນທີ່ໃຫ້ມີພື້ນຖານແຂງໃນຄວາມເຊື່ອນຶ່ງ?
4. ເປັນຫຍັງ ພື້ນຖານຂອງຕຶກ ຫລືພື້ນຖານຄວາມເຊື່ອຂອງພວກເຮົາຈຶ່ງມີບັນຫາ ແລະອຸປະສັກລົ້ມລົງກາງທາງ?

## 2. <u>ສ້າງດ້ວຍການງານທີ່ຖາວອນ:</u> (1 ໂກຣິນໂທ 3:12-17)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ 1 ໂກຣິນໂທ 3:12-17
- ໃຫ້ນັກຮຽນຊອກຫາໃນພຣະທັມ ອົພຍົບ 3:2; 19:18; 24:17; ກິຈການ 2:3; ແລະພຣະນິມິດ 4:5 ໃນປຶ້ມພຣະຄັມພີຂອງເຂົາເຈົ້າ. ຊີ້ໃສ່ໄຟ ແລ້ວວ່າ: ໄຟມີຄວາມໝາຍໃນສາສນາສາດ ຊຶ່ງເປັນເຄື່ອງໝາຍໃຊ້ໃນປຶ້ມພຣະຄັມພີ. ໃນພາສາກຣີກເປັນຮາກ ສໍາລັບພາສາອັງກິດເປັນພະຍາດຊໍາເຮື້ອ. ໃຫ້ນັກຮຽນອະທິບາຍ: "ໄຟ" ສາມາດໄໝ້ສິ່ງໃດສິ່ງນຶ່ງໝົດໄປ ຫລືສາມາດເຮັດໃຫ້ສິ່ງນຶ່ງບໍຣິສຸດໄດ້.
- ໃນທາງຄວາມຄິດຂອງຜູ້ທີ່ເຊື່ອທີ່ປຸກສ້າງໂບດ, ເພື່ອເສີມສ້າງຄວາມຄິດເຫັນຂອງບາງຄົນຕາມຄໍາເຫັນດັ່ງນີ້: ໂດຍການບອກຄົນອື່ນເຣື່ອງຄວາມລອດພົ້ນທີ່ຜ່ານທາງພຣະເຢຊູຄຣິດ, ການສນັບສນູນຜູ້ທີ່ເຊື່ອອື່ນ ໆ ໃນຄວາມເຊື່ອຂອງເຂົາ, ແລະໃນການປະພຶດໃນການດໍາຣົງຊີວິດຂອງພວກເຮົາທີ່ປາສຈາກມົນທິນ ແລະຄວາມສັດທາໃນພຣະເຈົ້າ.
- ສົນທະນາເຣື່ອງຄວາມໝາຍໃນສະຖານທີ່ສັກສິດ ຫລືວິຫານຂອງພຣະເຈົ້າ. ໂດຍການຊີ້ໃຫ້ເຫັນວ່າສະຖານທີ່ສັກສິດນັ້ນໄດ້ຕັ້ງໄວ້ໃຫ້ເປັນບ່ອນໂຄຣົບ ແລະເປັນບ່ອນບໍຣິສຸດ.

- ໃຫ້ນັກຮຽນຂຽນ 1 ໂກຣິນໂທ 3:12-17 ເພື່ອເອົາໄປຝຶກຝົນນຳມາໃຊ້ໃນການດຳຣົງຊີວິດຂອງເຂົາເຈົ້າ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: 1 ໂກຣິນໂທ 3:12-17

1. ຖ້າພວກເຮົາລອດພົ້ນໂດຍພຣະຄຸນຢ່າງແທ້ຈິງ, ບໍ່ແມ່ນໂດນການເຮັດເອົາເອງ, ການງານນັ້ນຈະເປັນແນວໃດ?
2. ການເປັນວິຫານອັນສັກສິດຂອງພຣະເຈົ້ານັ້ນມີຄວາມໝາຍແນວໃດ?
3. ທ່ານຈະເຮັດແນວໃດເພື່ອໃຫ້ພຣະເຈົ້າໄດ້ຮັບກຽດ ແລະໃຫ້ພຣະວິນຍານຂອງພຣະອົງເຂົ້າມາໃນຊີວິດຂອງທ່ານ ພາຍໃນອາທິດນີ້?

## 3. <u>ມີຊີວິດທີ່ຖວາຍກຽດແດ່ພຣະເຈົ້າ:</u> (1 ໂກຣິນໂທ 6:12-13, 18-20)

- ໃຫ້ນັກຮຽນອາສາສມັກອ່ານ 1 ໂກຣິນໂທ 6:12-13, 18-20. ຊຶ່ງຊີ້ໃຫ້ເຫັນການແປອອກຂອງຄົນໃນສມັຍນີ້ໄດ້ແປອອກໄປຫລາຍແບບທີ່ວາງໄວ້ລອບ ໆ ຂ້າງຂອງຂໍ້ທີ 12-13 ນັ້ນ, ຊຶ່ງສະແດງເຖິງບ່ອນທີ່ໂປໂລໄດ້ບັນທຶກໄວ້ ຊຶ່ງຄຣິສຕຽນຊາວໂກຣິນໂທໄດ້ເອົາມາໃຊ້ເປັນຄຳຂວັນໃນບາງກໍຣະນີ.
- ໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມ 1 ໂກຣິນໂທ 6:18-20.
- ສ້າງ 4 ຄໍລັມໃສ່ກະດານ. ແລ້ວຂຽນຄຳຕໍ່ໄປນີ້ໃສ່: **ຄວາມຄິດ, ການຖແລງການ, ການກະທຳ, ແລະນິສັຍ**
- ໃຫ້ນັກຮຽນສົນທະນາອະທິບາຍວ່າບັນດາຜູ້ທີ່ເຊື່ອທັງຫລາຍມີຄວາມແນ່ໃຈວ່າເຂົາເຈົ້າໄດ້ຖວາຍກຽດແດ່ພຣະເຈົ້າຕາມຄໍລັມໃດ.
- ຂໍໃຫ້ສົນທະນາແລະປ່ຽນຄວາມຄິດດັ່ງຕໍ່ໄປນີ້: "ບັນດາຜູ້ທີ່ເຊື່ອທີ່ໄດ້ຂອບພຣະຄຸນຜູ້ທີ່ໄຖ່ໂທດຄວາມຜິດບາບໃຫ້ແກ່ເຂົາ ແລະຜູ້ທີ່ສົມຄວນໄດ້ຮັບການຍ້ອງຍໍສັຣເສີນໃນການກະທຳຢ່າງເອົາຈິງເອົາຈັງຂອງເຂົາ ຊຶ່ງບໍ່ແມ່ນຍ່າງໜີຈາກການທົດລອງດ້ວຍຣາຄະຕັນຫາ"
- ຄຳຖາມ: ຖ້າພວກເຮົາເຮັດຕາມສິ່ງເຫລົ່ານີ້ແລ້ວຈະມີຫຍັງເກີດຂຶ້ນ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: 1 ໂກຣິນໂທ 6:12-13, 18-20

1. ໂປໂລໄດ້ປະເມີນຜົນ ວ່າຄຳຂວັນທີ່ຄຣິສຕຽນຊາວໂກຣິນໂທໃຊ້ນີ້ຖືກຕ້ອງເໝາະສົມຢ່າງໃດ?
2. ໃນທາງໃດທີ່ພວກເຮົາຈະເຮັດໃຫ້ຜູ້ທີ່ມີວັທນະທັມອື່ນມີຄວາມເຊື່ອຖື ແລະເຂົ້າມາໂບດໄດ້?
3. ພວກເຮົາໄດ້ມີຄວາມແນ່ໃຈໃນຄວາມຄິດ, ຄວາມເວົ້າ, ການກະທຳ ແລະອຸປນິສັຍຂອງພວກເຮົາວ່າພວກເຮົາໄດ້ເຮັດເພື່ອຖວາຍກຽດແດ່ພຣະເຈົ້າແລ້ວຢ່າງໃດ?
4. ທ່ານແລະຄົນໃນໂບດຂອງທ່ານໄດ້ກະທຳທຸກຢ່າງເພື່ອເປັນທີ່ຖວາຍກຽດແດ່ພຣະເຈົ້າທຸກວັນອາທິດຢູ່ບໍ່ ແລະມື້ວັນຈັນ ແລະມື້ຕໍ່ ໆ ໄປເດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕຽນທຸກຄົນເປັນວິຫານຂອງພຣະເຈົ້າ ຊຶ່ງຖືກສ້າງຂຶ້ນເທິງພື້ນຖານຂອງພຣະເຢຊູຄຣິດ.
- ພຣະເຈົ້າຈະເປັນຜູ້ໃຫ້ຄຸນນະພາບແກ່ຄຣິສຕຽນທຸກຄົນທີ່ທຳງານ.
- ຮ່າງກາຍຂອງຄຣິສຕຽນເປັນສະຖານທີ່ສັກສິດຂອງພຣະເຈົ້າ ທີ່ໃຫ້ພຣະວິນຍານບໍຣິສຸດຂອງພຣະອົງສະຖິດຢູ່ໃນ.